**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ
# ເຕັກນິກການປູກຖົ່ວຝັກຍາວ



ເອກະສານ ປະກອບການຝຶກອົບຮົມ 21:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢວກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 21 :
# ແນະນຳເຕັກນິກການປູກຖົ່ວຝັກຍາວ

## ສາລະບານ


ຖົ່ວຝັກຍາວ (Yard long Bean) .................................................. 2

ລັກສະນະທົ່ວໄປ .................................................. 2

ພັນທີ່ໃຊ້ປູກ .................................................. 3

ການກຽມໜານປູກ .................................................. 3

ການປູກ .................................................. 3

ການບົວລະບັດຮັກສາ .................................................. 4

ການເກັບກ່ຽວ .................................................. 5

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

## ການພວນດິນກຳຈັດຫຍ້າ

ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລ່ວງຜຸຜົງລະບາຍ ອາກາດ ແລະນ້ຳໄດ້ດີ ພ້ອມມກັບການກຳຈັດຫຍ້າໄປພ້ອມໆກັນ. ພໍເຄືອຖົ່ວມີໃບປົກຄຸມດິນແລ້ວບໍ່ຈຳເປັນເຮັດເລີຍ.

## ການປັກຄ້າງ

ເມື່ອຖົ່ວອາຍຸປະມານ 35 ວັນ ຫຼືເລີ່ມທາວເຄືອ ໃຫ້ຟ້າວປັກຄ້າງໂລດ ໂດຍໃຊ້ໄມ້ໄຜ່ ຫຼືໄມ້ທີ່ຫາໄດ້ໃນທ້ອງຖິ່ນນັ້ນຍາວປະມານ 2 ແມັດ ປັກຂ້າງຂຸມໆລະ 1 ອັນ ແລ້ວຄອບປາຍໄມ້ເຂົ້າຫາກັນ ມັດເຊືອກໃຫ້ແໜ້ນ ແລ້ວມັດຮາວຂວາງຕາມທາງຍາວຂ້າງລະ 3 ຫາ 4 ຮາວ ເພື່ອໃຫ້ແຂງແຮງມີບ່ອນໃຫ້ຖົ່ວເກາະຈັບຂຶ້ນໄດ້ອີກ.

## ການເກັບກ່ຽວ

ອາຍຸການເກັບກ່ຽວຂອງຖົ່ວຝັກຍາວປະມານ 50 ຫາ 75 ວັນ ຫຼັງຈາກຢອດເມັດຂຶ້ນກັບແຕ່ລະແນວພັນ. ການເກັບກ່ຽວຄວນເກັບເວລາເຊົ້າຕອນແດດອ່ອນ ເລືອກເກັບຝັກທີ່ຕຶ່ງດີ, ສີຝັກບໍ່ຈືດຈາງ, ຝັກລຽບສະໝ່ຳສະເໝີ ແລ້ວຟ້າວເຂົ້າຮົ່ມ ຫ້າມລ້າງນ້ຳເພາະຈະເຮັດໃຫ້ການເກັບຮັກສາບໍ່ໄດ້ດົນ ແລະຝັກຖົ່ວໂພງ.



# ຂໍ້ແນະນຳເຕັກນິກການປູກຖົ່ວຝັກຍາວ



## ຖົ່ວຝັກຍາວ (Yard long Bean)

ຖົ່ວຝັກຍາວ ເປັນພືດຜັກທີ່ນິຍົມບໍລິໂພກຝັກອ່ອນເປັນຜັກສົດ ແລະປະກອບໃນການປຸງແຕ່ງອາຫານໄດ້ຫຼາຍຢ່າງ. ມີທາດອາຫານດ້ານໂພສະນາການສູງ ໂດຍສະເພາະແມ່ນທາດຊີ້ນ ແລະແຮ່ທາດອື່ນໆ ທີ່ເປັນປະໂຫຍດຕໍ່ຮ່າງກາຍຂອງຄົນເຮົາ.

## ລັກສະນະທົ່ວໄປ

ຖົ່ວຝັກຍາວເປັນພືດໃນຕະກຸນ Leguminosae ມີຊື່ທາງວິທະຍາສາດວ່າ Vigna sesquipedalis L. ຖົ່ວຝັກຍາວເປັນພືດຕະກຸນຖົ່ວທີ່ມີລຳຕົ້ນເປັນເຄືອຍາວ. ສະນັ້ນ, ຈຶ່ງນິຍົມປູກຖົ່ວຝັກຍາວໃຫ້ຂຶ້ນຄ້າງເຮັດໃຫ້ຖົ່ວມີຜົນຜະລິດສູງ. ຖົ່ວຝັກຍາວເປັນຜັກທີ່ປູກງ່າຍໃຫຍ່ໄວສາມາດປູກ

ໄດ້ໃນດິນເກືອບທຸກຊະນິດ ແຕ່ມັກດິນຊາຍແກມຕົມ ປູກໄດ້ທຸກລະດູການໃນຮອບປີ, ມັກອາກາດຂ້ອນຂ້າງຮ້ອນສາມາດຈະເລີນເຕີບໂຕໄດ້ໃນອຸ່ນຫະພູມ 15 ຫາ 35°C, ປະຕິກິລິຍາຂອງດິນ (pH) 5.5 ຫາ 6.0 ເປັນພືດມັກແສງ.

## ແນວພັນທີ່ໃຊ້ປູກ

ຖົ່ວຝັກຍາວທີ່ນິຍົມປູກທົ່ວໄປ ເປັນພັນພື້ນເມືອງ, ພັນປັບປຸງ ແລະພັນລູກປະສົມລຸ້ນ 1 ຊຶ່ງມີລັກສະນະຂອງຝັກຍາວສີຂຽວອ່ອນ, ເປືອກບໍ່ພຽງ.

## ການຕຽມໜານປູກ

ຂຸດ ຫຼືໄຖດິນເລິກປະມານ 20 ຫາ 25 ຊຕມ. ຕາກດິນໄວ້ 7 ຫາ 10 ວັນ, ໂຮຍຝຸ່ນບົ່ມ ຫຼືຝຸ່ນຄອກ ເພື່ອປັບປຸງບຳລຸງສະພາບຂອງດິນ ໂດຍສະເພາະດິນຊາຍ ຫຼືດິນໜຽວ, ພວນດິນ ໃນໜານໃຫ້ລະອຽດພໍສົມຄວນ.

## ການປູກ

ການປູກຖົ່ວຝັກຍາວ ສາມາດປູກໄດ້ຫຼາຍວິທີເຊັ່ນ: ຂຸດຂຸມປູກ ປູກຕາມສັນຄູ ຫຼືປູກຕາມຮ່ອງ ຂຶ້ນກັບລະດູການ ຖ້າເປັນລະດູແລ້ງ ແມ່ນປູກຕາມຮ່ອງ ຖ້າເປັນລະດູຝົນ ແມ່ນປູກຕາມສັນຄູແຕ່ຕ້ອງໄດ້ຂຸດຂຸມຕາມສັນ



ຄູ ວິທີນີ້ມັກປູກເປັນສ່ວນຫຼາຍໂດຍໃຊ້ໄລຍະລະຫວ່າງຂຸມ 80 ຊຕມ. ລະຫວ່າງແຖວ (ຄູ) 80 ຊຕມ. ຂຸດຂຸມເລິກ 2 ຫາ 3 ຊຕມ. ຢອດເມັດຂຸມລະ 3 ຫາ 5 ເມັດ ຖົມດິນໜາບໍ່ເກີນ 1 ຊຕມ. ປົກດ້ວຍເຟືອງແຫ້ງຫົດນ້ຳໃຫ້ຊຸ່ມ ເມື່ອຕົ້ນຖົ່ວເລີ່ມ ຖອດຍອດມີໃບແທ້ 2 ຫາ 3 ໃບ ໃຫ້ຖອນແຍກເຫຼືອຂຸມລະ 2 ຫາ 3 ຕົ້ນ.

## ການບົວລະບັດຮັກສາ

### ການໃສ່ຝຸ່ນ

ເນື່ອງຖົ່ວຝັກຍາວເປັນພືດຕະກຸນຖົ່ວ ຕ້ອງການຝຸ່ນຟົດສຟເພື່ອໃຊ້ໃນການສ້າງດອກຈຶ່ງແນະນຳໃຫ້ໃຊ້ ຝຸ່ນເຄມີສູດ 11_24_12 ຫຼື 5_10_5 ຫຼືສູດທີ່ໃກ້ຄຽງກັນ ໃນຈຳນວນ 300 ຫາ 800 ກິໂລ/ເຮັກຕາໂດຍ ແບ່ງໃສ່ 3 ເທື່ອ: ເທື່ອທີ່1: ໃສ່ເຄິ່ງນຶ່ງເປັນຝຸ່ນຮອງພື້ນຕອນປູກ ແລ້ວພວນດິນປົກ. ເທື່ອທີ່2: ໃຫ້ໃສ່ເມື່ອຖົ່ວຝັກຍາວ ອາຍຸປະມານ 10 ຫາ 15 ວັນ. ເທື່ອທີ່3: ໃສ່ເມື່ອອາຍຸໄດ້ 25_30 ວັນ.

### ການໃຫ້ນ້ຳ

ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ປຽກເກີນໄປ ເບິ່ງຄວາມຊຸ່ມຊື່ນໃນໜານປູກ.